# ນຳໃຊ້ມາດຕະການປັບຕົວໃນລະດັບຄົວເຮືອນເພື່ອປົກປ້ອງເຂດດິນບໍລິເວນນ້ຳ, ສາຍນ້ຳ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດ

## ມາດຕະການປັບຕົວໃນລະດັບຄົວເຮືອນແມ່ນຫຍັງ?

ມາດຕະການທີ່ທ່ານນຳໃຊ້ໃນຄົວເຮືອນຂອງທ່ານເພື່ອຫຼຸດຜ່ອນຄວາມສ່ຽງຈາກໄພພິບັດສຳລັບຄອບຄົວ ແລະ ເພື່ອນບ້ານຂອງທ່ານ. ທ່ານສາມາດນຳໃຊ້ມາດຕະການຕ່າງໆໂດຍອີງໃສ່ຄວາມຮູ້, ປະສົບການ, ຂໍ້ມູນຂ່າວສານທີ່ມີຢູ່ ແລະ ຈາກການເຜີຍແຜ່ຂໍ້ມູນຂອງອຳນາດການປົກທ້ອງຖິ່ນ.

ທ່ານສາມາດເຂົ້າເຖິງຂໍ້ມູນກ່ຽວກັບປະເພດ ແລະ ຄວາມຮຸນແຮງຂອງຄວາມສ່ຽງຈາກໄພພິບັດ, ມາດຕະການທີ່ເປັນໄປໄດ້ ແລະ ຍຸດທະສາດເພື່ອຫຼຸດຜ່ອນຄວາມສ່ຽງ ແລະ ຜົນກະທົບ, ພ້ອມທັງການຊ່ວຍເຫຼືອທີ່ມີຢູ່ໂດຍກົງ ຈາກອຳນາດການປົກຄອງທ້ອງຖິ່ນ ຫຼື ຈາກວິທະຍຸທ້ອງຖິ່ນ, ໂທລະພາບ ແລະ ສື່ສັງຄົມອອນລາຍ.

ຕິດຕາມການແຈ້ງເຕືອນສະພາບອາກາດ ແລະ ນ້ຳຖ້ວມ, ລວມໄປເຖິງຕິດຕາມການເຜີຍແຜ່ຂໍ້ຄວາມ ໃນຊຸມຊົນເພື່ອປົກປັກຮັກສາຊັບສິນຂອງຄອບຄົວ/ການດຳລົງຊີວິດ.

## ເປັນຫຍັງມາດຕະການປັບຕົວໃນລະດັບຄົວເຮືອນຈຶ່ງມີຄວາມສຳຄັນ?

ມາດຕະການປັບຕົວໃນລະດັບຄົວເຮືອນມີບົດບາດຄວາມສຳຄັນໃນການຫຼຸດຜ່ອນຄວາມສ່ຽງຂອງຄອບຄົວ ແລະ ເພື່ອນບ້ານຂອງທ່ານຕໍ່ການປ່ຽນແປງຂອງດິນຟ້າອາກາດ ແລະ ໄພທຳມະຊາດ.

ບັນດາມາດຕະການດັ່ງກ່າວຍັງປະກອບສ່ວນເຂົ້າໃນການຮັກສາສະພາບແວດລ້ອມຂອງຄອບຄົວໃຫ້ມີສຸຂະພາບທີ່ດີ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດຕິດແປດ.

## "ທ່ານສາມາດປົກປັກຮັກສາເຂດດິນບໍລິເວນນ້ຳ ແລະ ສາຍນ້ຳໄດ້ ເລີ່ມຈາກຄົວເຮືອນຂອງທ່ານເອງ"

### ນຳໃຊ້ມາດຕະການລະດັບຄົວເຮືອນເຫຼົ່ານີ້ເພື່ອປົກປ້ອງເຂດດິນບໍລິເວນນ້ຳ ແລະ ສາຍນ້ຳ:

- ມາດຕະການການປົກປັກຮັກສາທາງກາຍະພາບເຊັ່ນ: ຍົກລະດັບເຮືອນ, ສ້ອມແປງເຮືອນ, ປ້ອງກັນໄພນ້ຳຖ້ວມ ແລະ ຊື້ປະກັນໄພຊັບສິນຂອງທ່ານ.
- ຄຸ້ມຄອງສິ່ງເສດເຫຼືອຂອງທ່ານເຊັ່ນ: ການແຍກປະເພດສິ່ງເສດເຫຼືອໃສ່ຖົງທີ່ຕ່າງກັນ.
- ຫຼີກລ້ຽງການກຳຈັດ ຫຼື ທຳລາຍສິ່ງເສດເຫຼືອໃນພື້ນທີ່ສາທາລະນະ, ເຂດດິນບໍລິເວນນ້ຳ ແລະ ສາຍນ້ຳ.
- ຮັກສາທໍ່ລະບາຍນ້ຳໃນເຮືອນໃຫ້ສະອາດ ແລະ ບໍ່ອຸດຕັນ ໂດຍການບໍ່ຖິ້ມຂີ້ເຫຍື້ອເຫຼົ່ານີ້ ລົງທໍ່ເປັນຕົ້ນ: ເປືອກໄຂ່, ຂີ້ກາເຟ, ເຈ້ຍເຊັດມື, ຜ້າເຊັດມື, ເປືອກໝາກໄມ້ ແລະ ອື່ນໆ.



GREEN CLIMATE FUND
MONRE
UN environment programme